# ORIENTATION

NOV 30 1981

# EMPLOYMENT

Lao
Translated by: Sophet Sayakhot

## a joint project of:

- International Rescue Committee
- Asian Pacific Family Outreach
- Indo-China Social Service Project
- International Institute
- SEAR Mental Health Project
- Valley Vocational Center
- Los Angeles, Unified School District
- Tolstoy Foundation
- Catholic Welfare Bureau
- Lutheran Social Service
- Church World Service
- United States Catholic Conference

INDOCHINA SOCIAL SERVICE PROJ.
1400 W. 9th ST.
LOS ANGELES, CA. 90015

# Employment

# Lao

## ການງານ

ໃນສະຫະລັດອະເມຣິກາ, ຊາວອະເມຣິກັນໄດ້ວາງມາດການສຳຄັນກ່ຽວກັບວຽກບາງຢ່າງ. ສ່ວນມາກນາຍຈ້າງເຄີຍຈ້າງພະນັກງານຊຶ່ງເປັນຄົນທີ່ຖືກມາດຕະຖານຂອງເຂົາເຈົ້າ. ນາຍຈ້າງແມ່ນໃສ່ການທຳງານຢ່າງເອົາຈິງເອົາຈັງພ້ອມທັງວາງມາດການອັນສຳຄັນກ່ຽວກັບໜ້າທີ່ຮັບຜິດຊອບ, ການມາທຳງານແລະເປັນຄົນທີ່ໜ້າເຊື່ອຖື. ຖ້າທ່ານຈະຊອກຫາງານທ່ານຄວນຈື່ສິ່ງສຳຄັນໄວ້ບາງຢ່າງດັ່ງຕໍ່ໄປນີ້ :

໑.- ຕ້ອງໄປບ່ອນສມັກງານໃຫ້ທັນເວລາຫລືໄປກ່ອນເວລານ້ອຍນຶ່ງ. ນາຍຈ້າງຖືເລື່ອງນີ້ສຳຄັນຫລາຍ ຖ້າທ່ານບໍ່ສາມາດມາທັນເວລາກໍໃຫ້ທ່ານໂທຣະສັບບອກເຂົາເຈົ້າ.

໒.- ການປະກອບໃບສຳມະໂນສມັກງານຈະຕ້ອງຂຽນໃຫ້ຮຽບແລະແຈ່ມແຈ້ງດີ. ເຣື່ອງນີ້ເປັນສິ່ງໜຶ່ງທີ່ຜູ້ທີ່ຈະຮັບທ່ານເຂົ້າການນັ້ນຕ້ອງກວດເບິ່ງກ່ອນ. ໃບປະກອບສຳນວນໃຊ້ເປັນການທົດລອງວັດເບິ່ງວ່າທ່ານຈະມີຄວາມພາກພຽນຫລືປະຕິບັດຕາມຄຳແນະນຳບໍ່.

໓.- ໃຫ້ໄປສຳພາດດ້ວຍຕົນເອງ. ຊາວອະເມຣິກັນຖືສຳຄັນຢ່າງນຶ່ງກ່ຽວກັບຄວາມເປັນຕົວເອງ. ຖ້າທ່ານມີບັນຫາດ້ານພາສາອັງກິດໃຫ້ເອົາພະນັກງານປະຊາສົງເຄາະໄປນຳເພື່ອຊ່ວຍແປໃຫ້ທ່ານຣະບຽບຢ່າເອົາຄົນພາຍໃນຄອບຄົວໄປນຳ.

໔.-ໃຫ້ພະຍາຍາມຕອບຄຳຖາມຫລາຍກວ່າ "ແມ່ນແລ້ວຫລືບໍ່ແມ່ນ" ພະຍາຍາມໃຫ້ຄຳແຈ່ມແຈ້ງແກ່ນາຍຈ້າງຊາບກ່ຽວກັບການມີວິຊາແລະຄວາມສາມາດຂອງຕົວທ່ານເອງ.

໕.- ໃຫ້ແຕ່ງຕົວຮຽບຮ້ອຍແລະຫ້າມສູບຢາແລະຫຍ້ຳໝາກຢາງຫອມ "ຊວິງກຳ" ເວລາສຳພາດ.

໖.- ຖືບັດ " I-94 "ແລະບັດ " Social Security " ໄປນຳ. ບັດເລົ່ານີ້ນາຍຈ້າງອາດຖາມເບິ່ງຈາກທ່ານ. ຖ້າທ່ານບໍ່ທັນໄດ້ຮັບບັດ " Social Security " ກໍຂໍໃຫ້ທ່ານເອົາຈົດໝາຍຈາກເຈົ້າໜ້າທີ່ຂອງ " Social Security "ມາສເນີເອົາກໍໄດ້.

ຕາມນິສັຍທົ່ວໄປຂອງນາຍຈ້າງນີ້, ການເລີ້ມງານໃໝ່ຈະຕ້ອງເລີ້ມແຕ່ຂັ້ນລຸ່ມໄປ; ນີ້ເອີ້ນວ່າຂຶ້ນທາງກົກໄປຫາປາຍ. ກ່ອນຈະເລື່ອນຂັ້ນຫລືຂຶ້ນເງິນເດືອນ, ນາຍຈ້າງມັກເບິ່ງຄົນງານໃໝ່ວ່າທ່ານເຮັດວຽກດີປານໃດ. ນີ້ເປັນຂອງທັມມະດາທົ່ວໄປນາຍຈ້າງກໍບໍ່ຢາກໃຫ້ທ່ານຢູ່ພຽງແຕ່ຂັ້ນດຽວຕລອດໄປ.

ສິ່ງທີ່ເຫລືອນານີ້, ຄົນອະເມຣິກັນເຫັນຄຸນຄ່າສຳຄັນສຳລັບຜູ້ທີ່ມີຄວາມໜັກແໜ້ນໃນຕົວເອງອີກຢ່າງນຶ່ງ, ນາຍຈ້າງບໍ່ຢາກຮັບຜູ້ທີ່ຍັງອາສັຍການຊ່ວຍເຫລືອນຳປະຊາສົງເຄາະຢູ່ ຜູ້ທີ່ອາສັຍການຊ່ວຍເຫລືອປະຊາສົງເຄາະນັ້ນເຂົາມອງເຫັນວ່າຜູ້ນັ້ນເປັນຄົນກຽດຄ້ານແລະອີກປະການນຶ່ງເປັນພະນັກງານທີ່ດ້ອຍສມັດຕະພາບຫລາຍ.

ຮຽນເອົາຄວາມຊຳນິຊຳນານເປັນສິ່ງທີ່ສຳຄັນຫລາຍ. ປະວັດການເຮັດວຽກການວອນແລະອິງໃສ່ຄວາມຊຳນິຊຳນານທັງສອງຢ່າງນີ້ມີນ້ຳໜັກຫລາຍໃຫ້ແກ່ນາຍຈ້າງຮັບເອົາທ່ານ. ປະວັດ

ຂອງການຖາວອນໝາຍຄວາມວ່າທ່ານບໍ່ຈຳເປັນຈະຕ້ອງການຄວາມຊຳນານອີກ, ທ່ານມີລັກສະນະທີ່ເປັນພະນັກງານທີ່ດີໃຫ້ນາຍຈ້າງເຫັນແລ້ວຕາມໃບປະວັດການນັ້ນ. ນີ້ສແດງວ່າມີລັກສະນະທີ່ໄວ້ວາງໃຈໄດ້. ມາກົງກັບເວລາແລະມີຄວາມຮັບຜິດຊອບ.

ເຖິງວ່າຄວາມຊຳນານແຕ່ກ່ອນບໍ່ສອດຄ່ອງກັບງານທີ່ໃໝ່ນີ້ກໍຕາມແຕ່ງານທີ່ເຄີຍເຮັດມາໄດ້ສແດງອອກມາໃຫ້ເຫັນນຳງານໃໝ່ຄືກັນ. ໃບອ້າງອີງຈາກທີ່ທຳງານແຕ່ກ່ອນຈະມີນ້ຳໜັກຫລາຍສຳລັບງານໃໝ່; ຄວາມຊຳນິຊຳນານສຳຄັນຫລາຍ. ຖ້າ ທ່ານມີແນວຄິດດ້ານວິຊາຊີບແລະຈຸດໝາຍປາຍທາງອັນໃດອັນນຶ່ງແລ້ວຂໍໃຫ້ທ່ານຈົ່ງພະຍາຍາມທຳງານໃຫ້ເໝາະທີ່ກ່ຽວແກ່ກັບຈຸດປະສົງນັ້ນ. ແລະໃຫ້ທ່ານຈຳໄວ້ສເມີວ່າດັ່ງທີ່ເຄີຍເລົ່າມາກ່ອນນີ້ແລ້ວນັ້ນ ທ່ານຈະຕ້ອງເລີ່ມທຳງານແຕ່ຂັ້ນຕ່ຳແລ້ວຈຶ່ງເລື່ອນຂຶ້ນໄປ. ສົມມຸດວ່າ ຈຸດປະສົງຂອງທ່ານແມ່ນສົນໃຈເຣື່ອງວິຊາ "ອິເລັກໂຕຣນິກ" ທ່ານຈະຕ້ອງເລີ່ມເປັນພນັກງານປະກອບສາກ່ອນ. ນີ້ກໍເປັນບັນຫາຍາກທີ່ຈະໃຫ້ນາຍຈ້າງທ່ານເຮັດການໜ້າທີ່ອັນສູງໂລດໂດຍບໍ່ມີຄວາມຊຳນິຊຳນານອັນໃດມາອ້າງອີງ. ຄວາມຊຳນິຊຳນານເຮັດໃຫ້ນາຍຈ້າງເຊື່ອຖືວ່າທ່ານມີຄວາມສາມາດໃນວຽກງານແລະໜ້າທີ່ຍັງວ່າງຢູ່ນັ້ນ.

ການອົບຮົມວິຊາຊີບແລະການສຶກສາເປັນສິ່ງທີ່ສຳຄັນຫລາຍ, ເຖິງຢ່າງໃດກໍດີສິ່ງເລົ່ານີ້ບໍ່ໄດ້ໃຫ້ຄວາມປະກັນກັບຄວາມຫວັງຂອງທ່ານໃນທັນໃດ. ຕາມທີ່ເລົ່າມາແລ້ວນັ້ນຄວາມຊຳນານແລະປະວັດວຽກການກໍໃຫ້ຄວາມສຳຄັນຢູ່ຄືກັນ. ທ່ານຈະຕ້ອງສແດງຄວາມສາມາດພ້ອມທັງປະກອບລັກສະນະທີ່ເປັນພະນັກງານທີ່ມີຄວາມສມັດຕະພາບດີ. ເຊັ່ນດຽວກັນ, ໃຫ້ຈຳໄວ້ວ່າຊ່ວງຂອງເນຣິກັນນີ້ມີນິສັຍເບິ່ງຄວາມສາມາດດ້ວຍຜົນງານແລະຄວາມໜັກແໜ້ນໃນຕົວເອງ. ຕາມທາງທີ່ດີທ່ານຄວນເຮັດວຽກກາງວັນແລະໄປໂຮງຮຽນຫລືບ່ອນອົບຮົມໃນເວລາກາງຄືນ. ເຣື່ອງນີ້ກໍນີ້ເປັນຕາເມື່ອຍລາແຕ່ວ່າອາດຊ່ວຍໃຫ້ໄດ້ຄວາມຊຳນານຫລືປະວັດວຽກການທີ່ຕ້ອງການໃນເວລາການຮຽນພາສາສຳຄັນແລະວິຊາຊີບ.

ການບັນລະຍາຍກ່ຽວກັບໂຄງການອົບຮົມວິຊາຊີບ " CETA " ອາດເປັນການດີຫລາຍກ່ຽວກັບທ່ານທີ່ຈະມີໂອກາດຮຽນວິຊາ ແລະພາສາ, ເຖິງຢ່າງໃດກໍດີຄົນຫລາຍໆຄົນໄດ້ໄປສມັກຂໍເຂົ້າຮຽນໃນໂຄງການອົບຮົມນີ້ທຸກໆປີ. ຄົນຂໍເຂົ້າຮຽນໂຄງການນີ້ຫລາຍກວ່າທີ່ເປີດຮັບເອົາແລະກົດຣະບຽບກໍຫຍຸ້ງຍາກແລະເຄັ່ງຄັດ. ໂດຍຫຍໍ້ແລ້ວ, ມັນກໍຍາກຢູ່ເໝືອນກັນທີ່ເຂົ້າຮຽນໃນໂຄງການ " CETA " ແລະການທີ່ຈະຮູ້ການເປີດຄັ້ງໃໝ່ນັ້ນກໍອາດຫລີກລ້ຽງບໍ່ໄດ້. ປາທີ່ຄອຍໃຫ້ຖ້າທ່ານບໍ່ໄດ້ຖືກຮັບເອົາເຂົ້າອົບຮົມໃນໂຄງການນີ້ຈຶ່ງລໍມາເປັນເວລານານ, ທ່ານຈະຕ້ອງຈຳສເມີວ່າ, ໃຫ້ພະຍາຍາມມີງານທຳແລະໄປຮຽນຕອນກາງຄືນເພື່ອຮຽນພາສາອັງກິດແລະວິຊາຊີບອື່ນໆ.

ຖ້າທ່ານທຳງານຫລືກຳລັງຊອກຫາງານແລະມີຄົນໃນຄອບຄົວຫລາຍຊຶ່ງຍັງອາສັຍ( AFDC ) ການຊ່ວຍເຫລືອປະຊາສົງເຄາະທ່ານກໍຈະໄດ້ຮັບການຊ່ວຍເຫລືອນີ້ໄປໂດຍຜ່ານໂຄງການ " WIN " ໃນໂຄງການນີ້ຖ້າທ່ານເຫັນວ່າລາຍໄດ້ຈາກເງິນເດືອນທ່ານເອງບໍ່ສາມາດລ້ຽງຄອບຄົວທ່ານໄດ້ແລ້ວ, ຍັງມີອີກທັງທາງນຶ່ງຊຶ່ງທ່ານຕ້ອງໄປກ່ຽວກັບພະນັກງານປະຊາສົງເຄາະທ່ານວ່າທ່ານຈະຕ້ອງຍັງຮັບເງິນສົດຊ່ວຍເຫລືອເພື່ອລ້ຽງຄອບຄົວຂອງທ່ານ. ທ່ານສົມຄວນຊອກຫາງານເຮັດດີກວ່າທີ່ຈະອາສັຍການຊ່ວຍເຫລືອປະຊາສົງເຄາະຕລອດໄປ.

ທ່ານຄວນຊອກງານທຳແລະມີສິ່ງສຳເລັດຢ່າງນຶ່ງເພື່ອໃຫ້ທ່ານກ້າວໜ້າຫລືຢູ່ຈົ່ງກັບງານໄວ້. ທ່ານຄວນຈະຕ້ອງໂທບອກນາຍຈ້າງທຸກເທື່ອເມື່ອທ່ານຖືກເຈັບຫລືມີວຽກຈຳເປັນສ່ວນຕົວມາທຳງານບໍ່ໄດ້. ກ່ອນອື່ນທ່ານຄວນໂທບອກນາຍຈ້າງຕອນເຊົ້າ. ນີ້ເປັນການຮັບຮູ້ວ່າຖືກຕ້ອງແລະນັບໄວ້ໃນບໍຣິສັດອະເມຣິກັນ

ມາການຊ້າເລື້ອຍໆເປັນການທີ່ໃຫ້ອະພັຍບໍ່ໄດ້, ທ່ານຕ້ອງໂທໄປບອກທີ່ທຳງານຄືກັນຖ້າທ່ານຈະມາການຊ້າ. ຖ້າທ່ານມາການຊ້າຫລາຍຄັ້ງຈະເປັນເຫດໃຫ້ທ່ານຈະຕ້ອງຖືກໄລ່ອອກຫລືບໍ່ດັ່ງກໍ່ຈະບໍ່ໄດ້ເລື່ອນຊັ້ນຂຶ້ນຫລືບໍ່ໄດ້ຂຶ້ນເງິນເດືອນ:

ຖ້າທ່ານລາອອກການ, ນີ້ເປັນຣະບຽບຫລືນິສັຍຂອງນາຍຈ້າງຕ້ອງໃຫ້ບອກລ່ວງໜ້າກ່ອນສອງອາທິດ.

ອັດຕຣາຄ່າແຮງງານໃນສະຫະຣັຖຢ່າງຕ່ຳແມ່ນ ໓ ໂດລາ ໕໐ ຕໍ່ຊົ່ວໂມງ. ນີ້ໄດ້ນັບໄວ້ຕາມກົດໝາຍຂອງຣັຖະບານກາງ. ນາຍຈ້າງອາດໃຫ້ຄ່າແຮງງານຕ່ຳກ່ວາກໍ່ເປັນໄດ້ໃນເວລາທ່ານຝຶກຢູ່ນັ້ນກໍ່ບໍ່ຄືກັນທົ່ວໄປຕາມທີ່ໄດ້ປະຕິບັດມາໃນຣັຖຄາລີຟໍເນັຽ. ອີກປະການນຶ່ງ, ເພື່ອໃຫ້ມີຄວາມຊຳນິຊຳນານຫລືວິຊາທ່ານອາດຈະຮັບອັດຕຣາຄ່າແຮງງານຕ່ຳກ່ອນກໍໄດ້ເພື່ອຈະຂຶ້ນເລື່ອນຕໍ່ໄປໃນພາຍໜ້າ. ຖ້າທ່ານບໍ່ຮັບເອົາຄ່າແຮງງານຕ່ຳແລ້ວທ່ານອາດບໍ່ມີໂອກາດຈັກເທື່ອທີ່ຈະໄດ້ຄວາມຊຳນານແລະປະວັດວຽກງານຊຶ່ງທ່ານຕ້ອງການເພື່ອໃຫ້ເຖິງເປົ້າໝາຍຂອງທ່ານ. ຖ້ານາຍຈ້າງຈ່າຍຄ່າແຮງງານຕ່ຳເກີນກ່ວາອັດຕຣາທີ່ຄາດໄວ້ນັ້ນຫລືຈ່າຍເງິນສົດອາດກິນແຮງທ່ານ. ເລື່ອງນີ້ກໍ່ຂຶ້ນຢູ່ກັບວຽກຫລືນາຍຈ້າງແຕ່ວ່າໃຫ້ທ່ານຣະວັງໄວ້ກັບບໍຣິສັດໃຫຍ່ໆທີ່ຈ່າຍເງິນສົດໃຫ້ຫລືຕ່ຳກ່ວາອັດຕຣາທີ່ນັບໄວ້.

ນາຍຈ້າງບາງບ່ອນອາດຖາມທ່ານເມື່ອເວລາສຳພາດທ່ານວ່າຮັບທຳງານລ່ວງເວລາບໍ່ຊຶ່ງຖືວ່າເກີນ ໔໐ ຊົ່ວໂມງຕໍ່ນຶ່ງອາທິດ. ການທີ່ສລາດຖາມໃນເວລາສຳພາດກໍ່ຄືວ່ານາຍຈ້າງຈະຈ່າຍຄ່າລ່ວງເວລາບໍ່? ຖ້າມີການຈ່າຍຄ່າລ່ວງເວລາ, ຕາມທັມະດາເຂົາໃຫ້ໃຫ້ຫລັງຈາກ ໔໐ ຊົ່ວໂມງໄປ ຄືເຮົາເຮັດ ໑ ຊົ່ວໂມງເຂົາຈ່າຍໃຫ້ ໑ ຊົ່ວໂມງກັບເຄິ່ງ. ບາງນາຍຈ້າງກໍ່ບໍ່ຈ່າຍຄ່າແຮງງານລ່ວງເວລາແລະດັ່ງນັ້ນທ່ານອາດຈະຕັດສິນໃຈວ່າທ່ານຈະຮັບເອົາການນັ້ນຫລືບໍ່?

"ເຊັກ" ທຸກຄັ້ງຈະຕ້ອງຖືກຫັກອອກເພື່ອພາສີ, ນີ້ກໍ່ເປັນຂອງທັມະດາ, ເງິນທີ່ຫັກອອກນັ້ນແມ່ນໄດ້ນັບໄວ້ຕາມກົດໝາຍ. ຖ້າທ່ານບໍ່ເຂົ້າໃຈວ່າເຂົາຫັກເງິນຫລາຍນ້ອຍປານໃດນັ້ນໃຫ້ທ່ານໄປຫາຫົວໜ້າຄວບຄຸມທ່ານເອງຫລືຜູ້ຈັດການອະທິບາຍ.

ຫລາຍບໍຣິສັດໃຫ້ປະໂຫຍດແກ່ພນັກງານ. ການຄ້ຳປະກັນອາດມີບາງຢ່າງເຊັ່ນ: ການເຈັບເປັນແລະຊີວິດປະກັນພັຍ, ຈ່າຍວັນຫຍຸດງານຂອງວັນສລອງງານຕ່າງໆຂອງຊາດ, ຈ່າຍມື້ເຈັບເປັນແລະຈ່າຍຍາມພັກຫລັງຊົ່ວລະຍະນຶ່ງຜ່ານໄປ. ປະໂຫຍດຕ່າງໆເລົ່ານີ້ຖືວ່າເປັນການໃຫ້ທົດແທນສຳລັບຜູ້ທີ່ມີລາຍໄດ້ຕ່ຳຊຶ່ງຖືວ່າເຂົາມີຄ່າສຳຄັນຫລາຍຕໍ່ທ່ານແລະຄອບຄົວ.

ສິ່ງທີ່ດີກ່ຽວກັບການຊ່ວຍປະກັນພັຍດ້ານພະຍາບານຊຶ່ງຊ່ວຍໃຫ້ທ່ານຈ່າຍຄ່າພະຍາບານຕ່ຳລົງຫລາຍຖ້າທ່ານຫາກເຈັບເປັນ.

ສ່ວນມາກ ຊາວອະເມຣິກັນໂດຍສະເພາະທີ່ຣັຖຄາລີຟໍເນັຽພາກັນໄດ້ໄປຮຽນຫລືໄປທຳງານບ່ອນ

ໄກງທຸກວັນ. ບາງບໍຣິສັດກໍມັກໃຫ້ຜູ້ໄປສມັກມີຣົຖເພື່ອຈະໄດ້ເປັນພາຫະນະໄປທຳງານທັ້ງແຕ່ວ່າ ເຣື່ອງນີ້ກໍບໍ່ຄືກັນທົ່ວໄປ. ທ່ານອາດຊອກຫາງານບ່ອນທາງບໍ່ໄກທີ່ທ່ານສາມາດໄປມາໄດ້ສະດວກ. ຖ້າ ທ່ານບໍ່ມີຣົຖທ່ານກໍຊອກຫາງານບ່ອນໃກ້ກັບບ້ານທ່ານ. ສິ່ງທີ່[illegible]ທີ່ສຸດກໍຄືວ່າໃຫ້ທ່ານພະຍາຍາມ ແອບໃຫ້ລ້ອງເຄີຍໄປມານຳຣົຖປະຈຳທາງ "ຣົຖບັສ" ຊຶ່ງຈະພາ[illegible]ປທຳງານໄດ້. ຄັນທ່ານເຮັດ ວຽກງານໄປນານໆແລ້ວທ່ານຈະພົບບຸກຄົນໃນທີ່ທຳງານທີ່ມີລັກສະນະແປກຕ່າງກັນ, ເຂົາເຈົ້າຈະມີ ຄວາມແປກຕ່າງທ່ານໃນດ້ານການເຄົາຣົບນັບຖື,ນິສັຍ, ການພູດຈາ, ພາສາແລະຂນົບທັມນຽມ. ຊາວອະເມຣິກັນມາຈາກຫລາຍຊຸ້ມວັນນະແລະເບື້ອງຫລັງແປກຕ່າງກັນ. ທ່ານອາດບໍ່ເຂົ້າໃຈນຳເຂົາ ເຈົ້າແລະຈະອາດມີປັນຫາທີ່ຈະເຂົ້າເຂົາໄດ້. ບັນຫານີ້, ບາ[illegible]ງຄາວກໍມີບັນຫາຢູ່ແຕ່ກໍບໍ່ໝາຍ ຄວາມວ່າຈະເປັນບັນຫາແບບນັ້ນທົ່ວໄປ; ຖ້າທ່ານພົບບັນຫາເ[illegible]ຖຽງກັນຂຶ້ນໃຫ້ທ່ານໄປຫາຫົວໜ້າ ເພື່ອແກ້ໄຂຊຶ່ງເປັນທາງທີ່ດີແກ່ທ່ານ. ຂໍທ່ານຢ່າໄດ້ລາອອກຫລືໃຊ້ອາຣົມຮ້າຍແຮງຊຶ່ງມັນບໍ່ສາມາດແກ້ ໄຂສິ່ງທີ່ບໍ່ເຂົ້າໃຈກັນນັ້ນໄດ້. ທຸກໆຄັ້ງບັນຫາຊຶ່ງເກີດຄວາມບໍ່ເຂົ້າໃຈກັນນັ້ນເນື່ອງມາຈາກພາສາແຕກ ຕ່າງກັນແລະປະເພນີຕ່າງກັນ. ຂໍໃຫ້ທ່ານພະຍາຍາມໃຫ້ໂອກາດຫົວໜ້າຂອງທ່ານແກ້ໄຂກ່ອນທ່ານຈະ ສະແດງທ່າທີອອກວ່າລາອອກການຫລືລົງມືຕີກັນ. ອີກທາງນຶ່ງ, ຖ້າທ່ານບໍ່ສາມາດແກ້ໄຂເຣື່ອງທີ່ເກີດ ຂຶ້ນໄດ້ແລ້ວໃຫ້ທ່ານໄປຊອກຫາການໃໝ່ກ່ອນທ່ານຈະຖືກເຈັບຫລືຈະພົບບັນຫາດ້ານເງິນຄຳພາຍໃນ ຄອບຄົວ.

********************